*Souphanouvong University Journal of Multidisciplinary Research and Development*
*2026, Vol. 12, 04, 113-118*
*https://doi.org/10.69692/SUJMRD1204113*

# Factors Influence Business Operations of SMEs Enterprise in Bounneua District, Phongsaly Province

**Sengthavy XINGCHAO [*1], Bounthavy SIPHANTHONG[2], Southavone SIOUDOMPHAN[2]**

*Department of Business Management, Faculty of Economics and Tourism Souphanouvong University, Lao PDR*

[*] ***Correspondence:*** *Sengthavy XINGCHAO, Industrial and Commerce Department, Phongsaly Province, Tel: 020 28553555, E-mail:* sengthavyxingchao@gmail.com

[1] *Faculty of Economics and Tourism, Souphanouvong University*

***Article Info:***

***Submitted: September 19, 2026***
***Revised: November 05, 2026***
***Accepted: November 09, 2026***

**Abstrct**

This research aims to study the business conditions of SME entrepreneurs and study the importance of factors affecting the business of SME entrepreneurs. The population used in the study is 258 SME entrepreneurs in Bounneua District, Phongsaly Province. The sample group can be determined using Taro Yamane's formula at a 95% confidence level, which results in an appropriate sample size of 157 people; A questionnaire is used as a tool to collect and compile data, and the statistics used to analyze this data include frequency values, percentages, average values, standard deviations, and multiple regression analysis conducted with the Ordinary Least Square (OLS) method in the SPSS version 27 statistical data analysis

Research findings indicate that small enterprises account for 71.32% of the total, with a registered capital of 100 billion Kip, while medium-sized enterprises account for 28.68%, with a registered capital of 175.12 billion Kip. When categorized by sector, the trade sector accounts for 45.61%, services for 32.22%, and manufacturing for 22.17%. Furthermore, eight factors comprising economic, political, social, technological, financial and readiness, environmental and legal, entrepreneurial characteristics, and market and business opportunities are all significantly associated with and impact business operations, with statistical significance at the 0.05 level.

***Keywords:*** Factors influencing, business operations, SMEs

## 1. ພາກສະໜາ

ວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ (Small and Medium-sized Enterprises: SMEs) ເປັນກົນໄກສຳຄັນໃນການຂັບເຄື່ອນເສດຖະກິດ ເນື່ອງຈາກມີບົດບາດໃນການສ້າງວຽກເຮັດງານທຳ, ສ້າງລາຍໄດ້, ເພີ່ມມູນຄ່າ ໃຫ້ແກ່ຊັບພະຍາກອນທ້ອງຖິ່ນ, ກະຕຸ້ນການລົງທຶນ ແລະ ສິ່ງເສີມນະວັດຕະກຳ. ນອກຈາກນີ້ SMEs ຍັງຊ່ວຍເພີ່ມທາງເລືອກໃຫ້ແກ່ຜູ້ບໍລິໂພກ, ສ້າງການແຂ່ງຂັນໃນຕະຫຼາດ ແລະ ເຊື່ອມໂຍງກິດຈະການລາຍຍ່ອຍເຂົ້າກັບລະບົບການຜະລິດ ແລະ ການຈຳໜ່າຍຂອງວິສາຫະກິດຂະໜາດໃຫຍ່. ດັ່ງນັ້ນ ການພັດທະນາ SMEs ຈຶ່ງເປັນສ່ວນສຳຄັນຂອງການສ້າງການເຕີບໂຕທາງເສດຖະກິດທີ່ທົ່ວເຖິງ ແລະ ມີຄວາມຍືນຍົງ. ໃນດ້ານທິດສະດີ ທິດສະດີການເຕີບໂຕຂອງວິສາຫະກິດຂອງ Penrose (1959) ອະທິບາຍວ່າ ການເຕີບໂຕຂອງກິດຈະການມີຄວາມສຳພັນກັບຊັບພະຍາກອນພາຍໃນ, ຄວາມສາມາດຂອງຜູ້ບໍລິຫານ ແລະ ການນຳຊັບພະຍາກອນມາໃຊ້ໃຫ້ເກີດປະໂຫຍດ. ສ່ວນທິດສະດີຊັບພະຍາກອນຂອງວິສາຫະກິດ (Resource-Based View: RBV) ຂອງ Barney (1991) ເນັ້ນວ່າ ຄວາມໄດ້ປຽບໃນການແຂ່ງຂັນເກີດຈາກການມີ ແລະ ການນຳໃຊ້ຊັບພະຍາກອນທີ່ມີຄຸນຄ່າ ຄວາມຫາຍາ ແລະ ຍາກຕໍ່ການລອກແບບ. ເມື່ອນຳທິດສະດີດັ່ງກ່າວມາພິຈາລະນາກັບ SMEs ຈະເຫັນໄດ້ວ່າ ທຶນທາງການເງິນ, ຄວາມຮູ້ ແລະ ທັກສະຂອງແຮງງານ, ຄວາມສາມາດໃນການບໍລິຫານ, ເຕັກໂນໂລຊີ, ການເຂົ້າເຖິງຕະຫຼາດ ແລະ ເຄືອຂ່າຍທາງທຸລະກິດລ້ວນແຕ່ອາດເປັນປັດໄຈສຳຄັນທີ່ກຳນົດຜົນການດຳເນີນງານ ແລະ ຄວາມສາມາດໃນການເຕີບໂຕຂອງວິສາຫະກິດ.

ວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ (SMEs) ມີຄວາມສຳຄັນຫຼາຍຕໍ່ການເຕີບໂຕທາງເສດຖະກິດ, ການຂັບເຄື່ອນ ແລະ ການເສີມສ້າງການພັດທະນາເສດຖະກິດແຫ່ງຊາດ. ວິສາຫະກິດເຫຼົ່ານີ້ປະກອບສ່ວນເຂົ້າໃນການຜະລິດ, ການຄ້າ, ການລົງທຶນ, ແລະ ການບໍລິການ, ສ້າງວຽກເຮັດງານທຳ, ສ້າງລາຍໄດ້, ແລະ ປັບປຸງຄຸນນະພາບຊີວິດຂອງປະຊາຊົນ (Sabkird & Pattanarangsun, 2020). ນອກຈາກນີ້ ວິສາຫະກິດຍັງເປັນພື້ນຖານໃຫ້ແກ່ການພັດທະນາອຸດສາຫະກຳທີ່ທັນສະໄໝ ເຊິ່ງນອກຈາກມີຕົ້ນທຶນການຜະລິດຕ່ຳແລ້ວ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ຍັງເພີ່ມມູນຄ່າໃຫ້ກັບຊັບພະຍາກອນທຳມະຊາດພາຍໃນ ແລະ ເຮັດໃຫ້ສາມາດພັດທະນາຜະລິດຕະພັນ ແລະ ການບໍລິການໃໝ່ໆ, ສ້າງນະວັດຕະກຳເພື່ອສິ່ງອອກໄປຍັງຕະຫຼາດຕ່າງປະເທດ (Lamjuntuek, 2016)

ວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ (SMEs) ເປັນກົນໄກຂັບເຄື່ອນເສດຖະກິດ ໂດຍຫຼາຍກວ່າ 94% ເປັນວິສາຫະກິດລາຍຍ່ອຍທີ່ເນັ້ນທຸລະກິດບໍລິການ, ການຄ້າ ແລະ ການແປຮູບສິນຄ້າກະສິກຳ; ລັດຖະບານເນັ້ນສົ່ງເສີມຜ່ານນະໂຍບາຍໜຶ່ງເມືອງໜຶ່ງຜະລິດຕະພັນ (ODOP) ແລະ ການລົງທຶນໂຄງສ້າງພື້ນຖານເພື່ອເພີ່ມຂີດຄວາມສາມາດການແຂ່ງຂັນ; ເປົ້າໝາຍເພີ່ມຈຳນວນຜູ້ປະກອບການ 2% ຕໍ່ປີ ໂດຍເນັ້ນການຍົກລະດັບມາດຖານສິນຄ້າເພື່ອເຂົ້າສູ່ຕະຫຼາດສາກົນ (Phacheerat, 2008). ປັດຈຸບັນວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ (SMEs) ໃນ ສປປ ລາວ ໄດ້ມີບົດບາດສຳຄັນໃນການສ້າງວຽກເຮັດງານທຳ ແລະ ການພັດທະນາເສດຖະກິດຢ່າງຫຼວງຫຼາຍ; ລັດຖະບານ ສປປ ລາວ ຈຶ່ງໄດ້ເລັງເຫັນຄວາມສຳຄັນ ແລະ ກຳນົດ 7 ນະໂຍບາຍໃນການພັດທະນາ SMEs ຕາມແຜນພັດທະນາເສດຖະກິດ ແລະ ສັງຄົມແຫ່ງຊາດ ສະບັບທີ 9 (2021-2025) ເຊິ່ງເນັ້ນການພັດທະນາ SMEs ໃຫ້ມີຄຸນນະພາບ, ມີຄວາມເຂັ້ມແຂງ ແລະ ສາມາດແຂ່ງຂັນກັບຕ່າງປະເທດ ທ່າມກາງສະຖານະການວິກິດການທາງດ້ານເສດຖະກິດໄດ້ (Ministry of Industry and Commerce of Lao PDR, 2024). ຍ້ອນເຫັນໄດ້ຄວາມສຳຄັນດັ່ງກ່າວ ຜັກ ແລະ ລັດຖະບານຂອງ

*Copyright © 2026 by the Authors. Published by Souphanouvong University. This is an open access article under the CC BY-NC-ND license (*http://creativecommons.org/licenses/by-nc-nd/4.0/

ພວກເຮົາ ຈຶ່ງໄດ້ເອົາໃຈໃສ່ວາງແນວທາງນະໂຍບາຍຊຸກຍູ້ສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ໃຫ້ມີຄວາມເຕີບໃຫຍ່ຂະຫຍາຍຕົວ, ມີຄວາມເຂັ້ມແຂງ, ແລະ ສາມາດແຂ່ງຂັນໄດ້ ດ້ວຍການສ້າງນິຕິກຳທີ່ກ່ຽວຂ້ອງ ເພື່ອສ້າງເງື່ອນໄຂເອື້ອອຳນວຍໃຫ້ແກ່ການສ້າງຜູ້ປະກອບກິດຈະການ ແລະ ວິສາຫະກິດຂະໜາດນ້ອຍ ແລະ ກາງ ໂດຍສະເພາະແມ່ນການສ້າງຄວາມສາມາດໃນການເຂົ້າຫາແຫຼ່ງທຶນ, ປັດໄຈການຜະລິດ, ແຫຼ່ງຂໍ້ມູນຂ່າວສານດ້ານເຕັກໂນໂລຊີ ແລະ ນະວັດຕະກຳຕ່າງໆ ເພໃສ່ເຮັດໃຫ້ວິສາຫະກິດຂະໜາດນ້ອຍ ແລະ ກາງ ສາມາດຂະຫຍາຍການຜະລິດ ແລະ ການບໍລິການໄດ້ຢ່າງມີປະສິດທິພາບ ແລະ ປະສິດທິຜົນ (Sioudomphan et al., 2024).

ສຳລັບສະພາບການຂອງປະເທດລາວ ຂໍ້ມູນຈາກການສຳມະໂນວິສາຫະກິດຄັ້ງທີ 3 ສົກປີ 2019–2020 ທີ່ຖືກນຳມາອ້າງອີງໃນບົດວິເຄາະຂອງ Organisation for Economic Co-operation and Development (2024) ລະບຸວ່າ ປະເທດລາວມີວິສາຫະກິດລວມ 133,998 ແຫ່ງໂດຍປະມານ ເຊິ່ງໃນນັ້ນວິສາຫະກິດຈຸລະພາກມີຈຳນວນຫຼາຍທີ່ສຸດ. ຂໍ້ມູນລະອຽດທີ່ OECD ນຳສະເໜີລະບຸວ່າ ວິສາຫະກິດຈຸລະພາກມີ 126,168 ແຫ່ງ ຫຼື 94.2% ຂອງວິສາຫະກິດທັງໝົດ, ວິສາຫະກິດຂະໜາດນ້ອຍມີ 6,600 ແຫ່ງ ຫຼື 4.9%, ຂະໜາດກາງ ມີ 954 ແຫ່ງ ຫຼື 0.7% ແລະ ຂະໜາດໃຫຍ່ມີ 276 ແຫ່ງ ຫຼື 0.2% (OECD, 2024). ສະຖິຕິນີ້ສະທ້ອນໃຫ້ເຫັນວ່າ ໂຄງສ້າງເສດຖະກິດລາວມີວິສາຫະກິດລາຍຍ່ອຍເປັນພື້ນຖານສຳຄັນ. ໃນດ້ານການຈ້າງງານ ລາຍງານຂອງທະນາຄານໂລກທີ່ຖືກນຳມາອ້າງອີງໃນລາຍງານວິເຄາະສະພາບເສດຖະກິດລາວ ລະບຸວ່າ ວິສາຫະກິດຈຸລະພາກ ຂະໜາດນ້ອຍ ແລະ ຂະໜາດກາງ (MSMEs) ມີສ່ວນຮ່ວມຮັບການຈ້າງງານປະມານ 82% ໃນປີ 2018 (World Bank, 2025). ວິສາຫະກິດກຸ່ມນີ້ສ່ວນໃຫຍ່ດຳເນີນກິດຈະການໃນຂະແໜງການຄ້າ, ການບໍລິການ ແລະ ການຜະລິດ ແຕ່ຍັງປະຊີນຂໍ້ຈຳກັດດ້ານການເຂົ້າເຖິງແຫຼ່ງທຶນ, ຄວາມສາມາດດ້ານການບໍລິຫານ, ລະບົບບັນຊີ, ທັກສະແຮງງານ ແລະ ການນຳໃຊ້ເຕັກໂນໂລຊີ. ນອກຈາກນີ້ ການດຳເນີນກິດຈະການນອກລະບົບຍັງເປັນອຸປະສັກຕໍ່ການເຂົ້າເຖິງສິນເຊື່ອ, ການຂະຫຍາຍຕະຫຼາດ ແລະ ການຮັບການສະໜັບສະໜຸນຈາກພາກລັດ (World Bank, 2025).

ສຳລັບ ແຂວງຜົ້ງສາລີ ວິສາຫະກິດຂະໜາດນ້ອຍ ແລະ ກາງ ແມ່ນເປັນອີງປະກອບທີ່ສຳຄັນຂອງພື້ນຖານເສດຖະກິດ ເຊິ່ງປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ, ການສ້າງວຽກເຮັດງານທຳ, ການຜະລິດສິນຄ້າ, ການສ້າງລາຍໄດ້, ຍົກລະດັບຄຸນນະພາບຊີວິດ ແລະ ລຶບລ້າງຄວາມທຸກຍາກຂອງປະຊາຊົນບັນດາເຜົ່າໄດ້ເທື່ອລະກ້າວ; ແຂວງຜົ້ງສາລີ ປະກອບມີ 7 ເມືອງ; ໃນນັ້ນ ເມືອງບຸນເໜືອເປັນເມືອງເກດສະບານ ແລະ ເປັນເມືອງຍຸດທະສາດທີ່ສຳຄັນທາງດ້ານເສດຖະກິດຂອງແຂວງ ເຊິ່ງປະກອບມີພື້ນຖານໂຄງລ່າງທີ່ສະດວກສະບາຍ ແລະ ເອື້ອອຳນວຍຕໍ່ການພັດທະນາເສດຖະກິດ-ສັງຄົມຂອງແຂວງ ເວົ້າລວມ, ເວົ້າສະເພາະ ແມ່ນມີລະບົບພື້ນຖານໂຄງລ່າງທີ່ສະດວກສະບາຍ ແລະ ເອື້ອອຳນວຍຕໍ່ການດຳເນີນທຸລະກິດຂອງຜູ້ປະກອບກິດຈະການ ແລະ ການດຳລົງຊີວິດຂອງປະຊາຊົນບັນດາເຜົ່າ ເປັນຕົ້ນ ແມ່ນມີໄຟຟ້າ, ນ້ຳປະປາ, ເຄຫຼາດຈຳໜ່າຍສິນຄ້າ ແລະ ເສັ້ນທາງຄົມມະນາຄົມ ທີ່ສະດວກ ສາມາດເຊື່ອມຕໍ່ກັບເມືອງຜົ້ງສາລີ, ເມືອງບຸນໃຕ້, ເມືອງຍອດອູ ແລະ ຍັງມີເສັ້ນທາງເຊື່ອມຈອດໄປສູ່ ສປ ຈີນ (Planning and Investment Department of Phongsaly, 2025); ນອກຈາກນີ້, ເມືອງບຸນເໜືອ ຍັງມີພູມສັນຖານທີ່ສວຍສົດງົດງາມ, ເປັນພູສູງ, ມີຄວາມອຸດົມສົມບູນທາງດ້ານຊັບພະຍາກອນທຳມະຊາດ ແລະ ປ່າໄມ້. ດັ່ງນັ້ນ, ຈຶ່ງກາຍເປັນປັດໄຈອັນສຳຄັນໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມຂອງແຂວງ, ການລົງທຶນ, ການຜະລິດສິນຄ້າ, ການຄ້າ ແລະ ການບໍລິການຂອງບັນດາແຂວງພາກເໜືອ (Industrial and Commerce Department of Phongsaly, 2025).

ສຳລັບພາບລວມ ຂອງເມືອງບຸນເໜືອ ແຂວງຜົ້ງສາລີ ເປັນພື້ນທີ່ທີ່ຄວນໄດ້ຮັບການສຶກສາດ້ານການດຳເນີນງານຂອງ SMEs ຢ່າງລະອຽດ ເນື່ອງຈາກສະພາບທະຫຼາດ, ທີ່ຕັ້ງທາງພູມສາດ, ລະບົບຄົມມະນາຄົມ ແລະ ໂຄງສ້າງທາງເສດຖະກິດ ອາດສ້າງທັງໂອກາດ ແລະ ຂໍ້ຈຳກັດໃຫ້ແກ່ຜູ້ປະກອບການ. ຂໍ້ມູນບໍລິບົດທີ່ຜູ້ສຶກສານຳສະເໜີ ໄດ້ຈາກ ພະແນກອຸດສາຫະກຳ ແລະ ການຄ້າແຂວງຜົ້ງສາລີ ລະບຸເຖິງການມີທະຫຼາດ, ໄຟຟ້າ, ນ້ຳປະປາ ແລະ ເສັ້ນທາງຄົມມະນາຄົມທີ່ເຊື່ອມໂຍງເມືອງບຸນເໜືອກັບພື້ນທີ່ໃກ້ຄຽງ ລວມທັງເສັ້ນທາງໄປສູ່ ສປ ຈີນ. ປັດໄຈເຫຼົ່ານີ້ອາດຊ່ວຍສົ່ງເສີມການຄ້າ, ການຂົນສົ່ງສິນຄ້າ ແລະ ການຂະຫຍາຍທະຫຼາດຂອງວິສາຫະກິດ. ແຕ່ໃນອີກດ້ານໜຶ່ງ ການມີໂຄງສ້າງພື້ນຖານບໍ່ໄດ້ໝາຍຄວາມວ່າ SMEs ທຸກແຫ່ງຈະສາມາດນຳໃຊ້ປັດໄຈເຫຼົ່ານັ້ນໄດ້ຢ່າງມີປະສິດທິຜົນ. ຜູ້ປະກອບການອາດປະເຊີນກັບຂໍ້ຈຳກັດດ້ານເງິນທຶນໝຸນວຽນ, ເງື່ອນໄຂການກູ້ຢືມ, ຄ່າຂົນສົ່ງ, ກຳລັງຊື້ຂອງຜູ້ບໍລິໂພກ, ການເຂົ້າເຖິງຂໍ້ມູນທະຫຼາດ, ການຂາດແຄນແຮງງານທີ່ມີທັກສະ, ການບັນຊີ ແລະ ການນຳໃຊ້ເຕັກໂນໂລຊີ. ຂໍ້ຈຳກັດເຫຼົ່ານີ້ຍັງຕ້ອງການການກວດສອບດ້ວຍຂໍ້ມູນພາກສະໜາມ ເພື່ອລະບຸວ່າປັດໄຈໃດມີຄວາມສຳຄັນຫຼາຍທີ່ສຸດຕໍ່ SMEs ໃນເມືອງບຸນເໜືອ. ດັ່ງນັ້ນ ຊ່ອງວ່າງທາງວິຊາການຂອງການສຶກສານີ້ ແມ່ນການຂາດຂໍ້ມູນເຊິງປະຈັກທີ່ສະແດງໃຫ້ເຫັນລະດັບຄວາມສຳຄັນຂອງປັດໄຈຕ່າງໆຕໍ່ການດຳເນີນທຸລະກິດຂອງ SMEs ໃນເມືອງບຸນເໜືອໂດຍສະເພາະ. ຍັງຈຳເປັນຕ້ອງມີການສຶກສາວ່າ ປັດໄຈດ້ານການເງິນ, ທະຫຼາດ, ການບໍລິຫານ, ແຮງງານ, ເຕັກໂນໂລຊີ, ໂຄງສ້າງພື້ນຖານ ແລະ ນະໂຍບາຍພາລັດ ມີຄວາມສຳຄັນໃນລະດັບໃດ ແລະ ປັດໄຈໃດຄວນໄດ້ຮັບການເອົາໃຈໃສ່ເປັນລຳດັບຕົ້ນ. ຜົນການສຶກສາຈະຊ່ວຍເພີ່ມອົງຄວາມຮູ້ດ້ານ SMEs ໃນບໍລິບົດທ້ອງຖິ່ນ ແລະ ສາມາດນຳໄປໃຊ້ເປັນຂໍ້ມູນປະກອບການວາງແຜນພັດທະນາທຸລະກິດ ແລະ ການອອກແບບມາດຕະການສົ່ງເສີມທີ່ເໝາະສົມກັບສະພາບພື້ນທີ່. (Department of Industry and Commerce Phongsaly Province, 2025).

ຈາກເຫດຜົນດັ່ງກ່າວ ຜູ້ສຶກສາຈຶ່ງມີຄວາມສົນໃຈທີ່ຈະສຶກສາ "ປັດໄຈທີ່ສົ່ງຜົນຕໍ່ການດຳເນີນທຸລະກິດຂອງວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ (SMEs) ໃນເມືອງບຸນເໜືອ ແຂວງຜົ້ງສາລີ" ໂດຍເນັ້ນການວິເຄາະລະດັບຄວາມສຳຄັນຂອງປັດໄຈທີ່ກ່ຽວຂ້ອງ ເພື່ອໃຫ້ໄດ້ຂໍ້ມູນທີ່ສາມາດນຳໄປປະກອບການປັບປຸງການບໍລິຫານ, ການວາງແຜນທຸລະກິດ ແລະ ການກຳນົດແນວທາງສົ່ງເສີມ SMEs ໃຫ້ສາມາດດຳເນີນກິດຈະການໄດ້ຢ່າງມີປະສິດທິພາບ, ມີຄວາມໝັ້ນຄົງ ແລະ ສາມາດເຕີບໂຕໄດ້ຢ່າງຍືນຍົງໃນຂະນາຄົດ. ເຊິ່ງໄດ້ກຳນົດຈຸດປະສົງຂອງການສຶກສາໄວ້ດັ່ງນີ້:

1) ເພື່ອສຶກສາສະພາບການດຳເນີນວິສາຫະກິດຂອງຜູ້ປະກອບການວິສາຫະກິດ SMEs ໃນເມືອງບຸນເໜືອ, ແຂວງຜົ້ງສາລີ.

2) ເພື່ອສຶກສາລະດັບຄວາມສຳຄັນຂອງປັດໄຈທີ່ສົ່ງຜົນຕໍ່ການດຳເນີນວິສາຫະກິດຂອງຜູ້ປະກອບການວິສາຫະກິດ SMEs ໃນເມືອງບຸນເໜືອ, ແຂວງຜົ້ງສາລີ.

## 2. ອຸປະກອນ ແລະ ວິທີການ

2.1 ກຸ່ມຕົວຢ່າງ

ການຄົ້ນຄວ້ານີ້ ໄດ້ກຳນົດເອົາປະຊາກອນແມ່ນຜູ້ປະກອບການວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ພາຍໃນເມືອງບຸນເໜືອ, ແຂວງຜົ້ງສາລີ ຈຳນວນ 258 ວິສາຫະກິດ ແລະ ສາມາດຄິດໄລ່ກຸ່ມຕົວຢ່າງຈາກສູດຄິດໄລ່ທີ່ຮູ້ຈຳນວນປະຊາກອນທີ່ແນ່ນອນ ຕາມວິທີຂອງ Yamane (1973) ໄດ້ກຸ່ມຕົວຢ່າງຈຳນວນ 157 ວິສາຫະກິດ.

2.2 ເຄື່ອງມືທີ່ໃຊ້ໃນການຄົ້ນຄວ້າ

ການຄົ້ນຄວ້ານີ້ ໄດ້ນຳໃຊ້ວິທີການສຶກສາແບບປະລິມານ ໂດຍນຳໃຊ້ແບບສອບຖາມທີ່ມີລັກສະນະປາຍປິດ ໂດຍໄດ້ນຳເອົາບົດຄົ້ນຄວ້າທີ່ກ່ຽວຂ້ອງ

ຂອງ Sirivanh, & Chaikeaw (2012), Lamjuntuek (2016), Siritho (2016), Kamolsin (2022) ມາຫຳນິດຂອບເນື້ອຄວາມຄິດເພື່ອສ້າງເຄື່ອງມື ຫຼື ແບບສອບຖາມທີ່ໃຊ້ໃນການເກັບກຳຂໍ້ມູນ ເຊິ່ງກຳນົດເປັນຄຳຖາມປາຍປິດ ຫຼື ເປັນ Choice ໃຫ້ເລືອກ ໂດຍແບ່ງອອກເປັນ 3 ສ່ວນ ຄື: ມູນທົ່ວໄປຂອງຜູ້ຕອບແບບສອບຖາມ ຫຼື ຜູ້ປະກອບການວິສາຫະກິດ, ຂໍ້ມູນກ່ຽວກັບການດຳເນີນກິດຈະການ ແລະ ຂໍ້ມູນກ່ຽວກັບປັດໄຈທີ່ສົ່ງຜົນຕໍ່ການດຳເນີນທຸລະກິດຂອງຜູ້ປະກອບວິສາຫະກິດ SMEs. ໂດຍໄດ້ຜ່ານການກວດເນື້ອໃນຈາກຜູ້ຊ່ຽວຊານ 3 ທ່ານ ແລະ ຫາຄ່າດັດສະນີຄວາມສອດຄ່ອງລະຫວ່າງເນື້ອໃນຄຳຖາມ ກັບ ຈຸດປະສົງ (Index of Item-Objective Congruence ຫຼື IOC) ລາຍຂໍ້ແມ່ນ ມີຄ່າເທົ່າກັບ ຕັ້ງແຕ່ 0.66 – 1.00 ແລະ ສາມາດຫາຄ່າ IOC ລວມ ໄດ້ເທົ່າກັບ 0.97 ເຊິ່ງໃຫຍ່ກວ່າ 0.50 ສະແດງວ່າເນື້ອໃນແບບສອບຖາມສອດຄ່ອງກັບ ຈຸດປະສົງໃນການສຶກສາ ແລະ ສາມາດນຳໄປໃຊ້ເປັນເຄື່ອງມືໃນການລົງເກັບຂໍ້ ມູນໃນຂັ້ນຕໍ່ໄປໄດ້.

### 2.3 ການເກັບລວບລວມຂໍ້ມູນ

ນຳໃຊ້ແບບສອບຖາມລົງເກັບກຳຂໍ້ມູນຈາກກຸ່ມເປົ້າໝາຍ ເຊິ່ງແມ່ນ ບັນດາຜູ້ປະກອບການວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ພາຍໃນ ເມືອງບຸນເໜືອ, ແຂວງຜົ້ງສາລີ ນັບແຕ່ເດືອນມີຖຸນາ ຫາເດືອນ ສິງຫາ; ໂດຍໄດ້ ເຮັດໜັງສືສະເໜີຫາຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ ແລະ ພະແນກການທີ່ກ່ຽວຂ້ອງ ແລ້ວຈຶ່ງນຳເອົາແບບສອບຖາມລົງໄປແຈກຢາຍໃຫ້ ກັບຜູ້ປະກອບການວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ; ພ້ອມທັງໄດ້ ອະທິບາຍລາຍລະອຽດກ່ຽວກັບແຕ່ລະຂໍ້ຄຳຖາມໃນແບບສອບຖາມເພື່ອໃຫ້ຜູ້ ຕອບແບບສອບຖາມມີຄວາມເຂົ້າໃຈ ແລະ ໃຫ້ຂໍ້ມູນໄດ້ຖືກຕ້ອງຕາມຈຸດປະສົງ ທີ່ຕ້ອງການ ແລະ ສາມາດເກັບກຳຄືນແບບສອບຖາມໄດ້ຄົບຕາມຈຳນວນກຸ່ມ ຕົວຢ່າງ 100%.

### 2.4 ການວິເຄາະຂໍ້ມູນ

ນຳໃຊ້ວິທີການຄົ້ນຄ້ວາແບບພັນລະນາ ເພື່ອອະທິບາຍຂໍ້ມູນທົ່ວໄປ ກ່ຽວກັບຂໍ້ມູນຄຸນລັກສະນະຂອງຜູ້ປະກອບການ ແລະ ສະຖານການດຳເນີນວິ ສາຫະກິດ SMEs ຂອງຜູ້ປະກອບການວິສາຫະກິດ ໃນເມືອງບຸນເໜືອ ແຂວງຜົ້ງ ສາລີ ໂດຍການນຳໃຊ້ສະຖິຕິພື້ນຖານເພື່ອຊອກຫາຄ່າຄວາມຖີ່, ຄ່າສ່ວນຮ້ອຍ (%) ເຊິ່ງຈະສະແດງເປັນຕາຕະລາງເພື່ອມາອະທິບາຍ ແລະ ໄດ້ນຳໃຊ້ຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຕະຖານ ເປັນເຄື່ອງມືໃນການວິເຄາະ ແລະ ອະທິບາຍລະດັບ ຄວາມສຳຄັນຂອງປັດໄຈທີ່ມີຜົນຕໍ່ການດຳເນີນວິສາຫະກິດ SMEs ຂອງຜູ້ ປະກອບການວິສາຫະກິດ ໃນເມືອງບຸນເໜືອ ແຂວງຜົ້ງສາລີ ໂດຍການວິເຄາະ ຜ່ານໂປຼແກຼມວິເຄາະຂໍ້ມູນທາງສະຖິຕິ (SPSS Version 27).

## 3. ຜົນໄດ້ຮັບ

3.1 ສະພາບການດຳເນີນວິສາຫະກິດຂອງຜູ້ປະກອບການວິສາຫະກິດ SMEs ໃນ ເມືອງບຸນເໜືອ, ແຂວງຜົ້ງສາລີ.

ຜູ້ປະກອບການວິສາຫະກິດຢູ່ເມືອງບຸນເໜືອ ແຂວງຜົ້ງສາລີ ໂດຍສ່ວນ ໃຫຍ່ແມ່ນເພດຊາຍ ກວມເອົາ 59.87% ແລະ ເພດຍິງ ກວມເອົາ 40.13%; ສ່ວນ ໃຫຍ່ມີອາຍຸຢູ່ລະຫວ່າງ 40 – 49 ປີ ກວມເອົາ 42.67%, ຮອງລົງມາແມ່ນມີ ອາຍຸຢູ່ລະຫວ່າງ 30 – 39 ປີ ກວມເອົາ 42.67%; ສ່ວນຫຼາຍມີສະຖານະພາບທີ່ ແຕ່ງງານແລ້ວກວມເອົາ 84.71% ແລະ ມີລະດັບການສຶກສາຈົບປະລິນຍາຕີກວມ ເອົາ 37.58% ແລະ ຈົບຊັ້ນສູງກວມເອົາ 29.94%; ເຊິ່ງມີທີ່ຢູ່ອາໄສເດີມພາຍໃນ ເມືອງບຸນເໜືອ ກວມເອົາ 67.52% ແລະ ມາຈາກຕ່າງເມືອງ ກວມເອົາ 32.48%. ໄລຍະເວລາໃນການດຳເນີນວິສາຫະກິດ ໂດຍສ່ວນໃຫຍ່ແມ່ນໜ້ອຍກວ່າ 5 ປີ ກວມເອົາ 47.77%, ຮອງລົງມາແມ່ນດຳເນີນວິສາຫະກິດມາແລ້ວ 15 ປີ ຂຶ້ນໄປ ກວມເອົາ 19.74%; ມີທຶນຈົດທະບຽນຫຼາຍກວ່າ 600,000,000 ກີບ ກວມເອົາ 37.58% ແລະ ໜ້ອຍກວ່າ 200,000,000 ກີບ ກວມເອົາ 27.39%; ເຊິ່ງໂດຍ ສ່ວນໃຫຍ່ແມ່ນວິສາຫະກິດສ່ວນບຸກຄົນ ກວມເອົາ 77.71% ແລະ ວິສາຫະກິດ ຮຸ້ນສ່ວນ ກວມເອົາ 17.20%, ສ່ວນຕົວແທນຈຳໜ່າຍ ກວມເອົາ 5.09% ຕາມລຳດັບ. ເຊິ່ງປະກອບມີວິສາຫະກິດບໍລິການ ຈຳນວນ 67 ວິສາຫະກິດ ກວມ ເອົາ 42.67%, ວິສາຫະກິດການຄ້າ ຈຳນວນ 43 ວິສາຫະກິດ ກວມເອົາ 27.39%, ວິສາຫະກິດຂະແໜງອຸດສາຫະກຳ-ຫັດຖະກຳ ຈຳນວນ 27 ວິສາຫະ ກິດ ກວມເອົາ 17.20% ແລະ ຂະແໜງກະສິກຳ ຈຳນວນ 20 ວິສາຫະກິດ ກວມ ເອົາ 12.74%. ວິສາຫະກິດໂດຍສ່ວນຫຼາຍ ແມ່ນຢູ່ເຂດເທດສະບານເມືອງ ກວມ ເອົາ 67.52%, ໃນເຂດໃຈກາງເມືອງ ກວມເອົາ 19.75% ແລະ ເຂດນອກຕົວ ເມືອງ ກວມເອົາ 12.74%. ລັກສະນະການສ້າງຕັ້ງວິສາຫະກິດ ໂດຍສ່ວນໃຫຍ່ ແມ່ນສ້າງຂຶ້ນເອງ ກວມເອົາ 82.80%, ເຊົ່າທຸລະກິດຄົນອື່ນ ກວມເອົາ 15.29% ແລະ ຊື້ທຸລະກິດຄົນອື່ນ ກວມເອົາ 1.91% ຕາມລຳດັບ. ຈຳນວນພະນັກງານໃນ ວິສາຫະກິດ ໜ້ອຍກວ່າ 5 ຄົນ ກວມເອົາ 67.51%, 5 – 9 ຄົນ ກວມເອົາ 15.29%, 10 – 14 ຄົນ ກວມເອົາ 12.10% ແລະ 15 ຄົນ ຂຶ້ນໄປ ກວມເອົາ 5.10% ຕາມລຳດັບ. ຄ່າຈ້າງ/ເງິນເດືອນພະນັກງານ ແມ່ນຈະເລີ່ມແຕ່ 1,500,000 ກີບ ຂຶ້ນໄປ ເຊິ່ງໂດຍສ່ວນໃຫຍ່ແມ່ນໃຫ້ຄ່າຈ້າງ ຫຼື ເງິນເດືອນ ພະນັກງານ ຫຼາຍກວ່າ 2,500,000 ກີບ ກວມເອົາ 40.13%, ຮອງລົງມາແມ່ນ ໃຫ້ຄ່າຈ້າງ ຫຼື ເງິນເດືອນພະນັກງານຢູ່ລະຫວ່າງ 1,500,000 – 2,000,000 ກີບ ກວມເອົາ 35.03% ແລະ ໃຫ້ຄ່າຈ້າງ ຫຼື ເງິນເດືອນພະນັກງານຢູ່ລະຫວ່າງ 2,000,001 – 2,500,000 ກີບ ກວມເອົາ 24.84% ຕາມລຳດັບ. ສ່ວນຫຼາຍວິ ສາຫະກິດມີເງິນທຶນໝຸນວຽນ ຫຼາຍກວ່າ 400,000,000 ກີບ ກວມເອົາ 45.00%, ຮອງລົງມາແມ່ນມີເງິນທຶນໝຸນວຽນຢູ່ລະຫວ່າງ 100,000,000 – 200,000,000 ກີບ ກວມເອົາ 25.00%, ມີລູກຄ້າສະເລ່ຍຕໍ່ວັນ ໜ້ອຍກວ່າ 20 ຄົນ ກວມເອົາ 54.78%, ຮອງລົງມາແມ່ນ ມີລູກຄ້າສະເລ່ຍຕໍ່ວັນຢູ່ລະຫວ່າງ 20 – 39 ຄົນ; ວິສາຫະກິດມີລາຍໄດ້ສະເລ່ຍ/ເດືອນ ໜ້ອຍກວ່າ 20,000,000 ກີບ ກວມເອົາ 54.78%, ຮອງລົງມາແມ່ນ ມີລາຍໄດ້ສະເລ່ຍ/ເດືອນ ຢູ່ລະຫວ່າງ 20,000,000 – 40,000,000 ກີບ ກວມເອົາ 24.84% ແລະ ຫຼາຍກວ່າ 60,000,000 ກີບ ກວມເອົາ 12.74%.

3.2 ລະດັບຄວາມສຳຄັນຂອງປັດໄຈທີ່ສົ່ງຜົນຕໍ່ການດຳເນີນວິສາຫະ ກິດຂອງຜູ້ປະກອບການວິສາຫະກິດ SMEs ໃນເມືອງບຸນເໜືອ, ແຂວງຜົ້ງສາລີ.

ຜົນການວິເຄາະລະດັບຄວາມສຳຄັນຂອງປັດໄຈທີ່ສົ່ງຜົນຕໍ່ການດຳ ເນີນວິສາຫະກິດຂອງຜູ້ປະກອບການວິສາຫະກິດ SMEs ໃນເມືອງບຸນເໜືອ, ແຂວງຜົ້ງສາລີ ພົບວ່າ: ປັດໄຈທີ່ມີຄວາມສຳຄັນຢູ່ໃນລະດັບຫຼາຍ ປະກອບດ້ວຍ ປັດໄຈຄຸນລັກສະນະພາຍໃນຂອງຜູ້ປະກອບ ແລະ ປັດໄຈດ້ານຕະຫຼາດ ແລະ ໂອກາດທຸລະກິດ; ສ່ວນປັດໄຈດ້ານເສດຖະກິດ, ປັດໄຈດ້ານການເມືອງ, ປັດໄຈ ດ້ານສັງຄົມ, ປັດໄຈດ້ານເທັກໂນໂລຊີ , ປັດໄຈດ້ານການເງິນ ແລະ ຄວາມພ້ອມ, ປັດໄຈດ້ານສະພາບແວດລ້ອມ ແລະ ກົດໝາຍ ແມ່ນມີຄວາມສຳຄັນຢູ່ໃນລະດັບ ປານກາງ. ເມື່ອພິຈາລະນາລາຍລະອຽດໃນແຕ່ລະປັດໄຈ ພົບວ່າ:

ປັດໄຈຄຸນລັກສະນະພາຍໃນຂອງຜູ້ປະກອບການ ໂດຍພາບລວມມີ ຄວາມສຳຄັນຢູ່ໃນລະດັບຫຼາຍ ເຊິ່ງມີຄ່າສະເລ່ຍ ເທົ່າກັບ 3.56 ແລະ ຄ່າຜັນປ່ຽນ ມາດຕະຖານ 0.52; ເຊິ່ງພິຈາລະນາເປັນປັດໄຈຍ່ອຍ ພົບວ່າ: ການດຳເນີນວິສາຫະ ກິດເນື່ອງຈາກຄວາມມັກສ່ວນຕົວ, ຄວາມສາມາດໃນການພັດທະນາກິດຈະການ ແລະ ຄວາມຮູ້ຄວາມສາມາດໃນການນຳໜ້ົດທິດທາງຂອງທຸລະກິດຂອງຜູ້ປະກອບ ການ ແມ່ນມີຄວາມສຳຄັນຢູ່ໃນລະດັບຫຼາຍ ເຊິ່ງມີຄ່າສະເລ່ຍ ເທົ່າກັບ 4.05, 3.53 ແລະ 3.48 ຕາມລຳດັບ; ສ່ວນຄວາມຮູ້ຄວາມສາມາດໃນການແກ້ໄຂບັນຫາ ແລະ ຄວາມສາມາດຍອມຮັບຄວາມສ່ຽງຂອງຜູ້ປະກອບການ ແມ່ນມີຄວາມສຳ ຄັນຢູ່ໃນລະດັບປານກາງ ເຊິ່ງມີຄ່າສະເລ່ຍ ເທົ່າກັບ 3.38 ເທົ່າກັນ.

ປັດໄຈດ້ານເສດຖະກິດ ໂດຍພາບລວມມີຄວາມສຳຄັນຢູ່ໃນລະດັບ ປານກາງ ເຊິ່ງມີຄ່າສະເລ່ຍ ເທົ່າກັບ 3.29ແລະ ຄ່າຜັນປ່ຽນມາດຕະຖານ 0.51;

ເຊິ່ງພິຈາລະນາເປັນປັດໄຈຍ່ອຍ ພົບວ່າ: ລະດັບອັດຕາເງິນເຟີ້ໃນລະບົບເສດຖະກິດ ແມ່ນມີຄວາມສຳຄັນຢູ່ໃນລະດັບຫຼາຍ ເຊິ່ງມີຄ່າສະເລ່ຍ ເທົ່າກັບ 4.13; ສ່ວນອັດຕາຄ່າຈ້າງແຮງງານ, ການຂະຫຍາຍຕົວທາງດ້ານເສດຖະກິດຂອງເມືອງ, ຄວາມເໝາະສົມຂອງຕົ້ນທຶນສິນຄ້າ ແລະ ການບໍລິການ, ຄວາມເໝາະສົມອັດຕາດອກເບ້ຍເງິນກູ້ສຳລັບວິສາຫະກິດ ແລະ ການເຂົ້າເຖິງແຫຼ່ງທຶນ ແມ່ນມີຄວາມສຳຄັນຢູ່ໃນລະດັບປານກາງ ເຊິ່ງມີຄ່າສະເລ່ຍ ເທົ່າກັບ 3.33, 3.23, 3.13, 3.05 ແລະ 2.93 ຕາມລຳດັບ.

ປັດໄຈດ້ານການເມືອງ ໂດຍພາບລວມມີຄວາມສຳຄັນຢູ່ໃນລະດັບປານກາງ ເຊິ່ງມີຄ່າສະເລ່ຍ ເທົ່າກັບ 3.05 ແລະ ຄ່າຜັນປ່ຽນມາດຕະຖານ 0.75; ເຊິ່ງພິຈາລະນາເປັນປັດໄຈຍ່ອຍ ພົບວ່າ: ໂອກາດຈາກສະຖຽນລະພາບທາງການການເມືອງ, ການໄດ້ຮັບໂອກາດຕາມນະໂຍບາຍການສົ່ງເສີມການລົງທຶນຂອງລັດ ແລະ ໂອກາດຈາກນະໂຍບາຍທາງດ້ານການເງິນຂອງລັດ ລ້ວນແຕ່ມີຄວາມສຳຄັນຢູ່ລະດັບປານກາງທັ້ງໝົດ ເຊິ່ງມີຄ່າສະເລ່ຍ ເທົ່າກັບ 3.33, 2.95 ແລະ 2.90 ຕາມລຳດັບ;

ປັດໄຈດ້ານສັງຄົມ ໂດຍພາບລວມມີຄວາມສຳຄັນຢູ່ໃນລະດັບປານກາງ ເຊິ່ງມີຄ່າສະເລ່ຍ ເທົ່າກັບ 3.26 ແລະ ຄ່າຜັນປ່ຽນມາດຕະຖານ 0.76; ເຊິ່ງພິຈາລະນາເປັນປັດໄຈຍ່ອຍ ພົບວ່າ: ໂຄງສ້າງປະຊາກອນ, ຄ່ານິຍົມຂອງສັງຄົມ ແລະ ລູກຄ້າໃນການອຸປະໂພກ-ບໍລິໂພກ, ລະດັບການສຶກສາຂອງຜູ້ບໍລິໂພກ ແລະ ລາຍໄດ້ຂອງຜູ້ບໍລິໂພກ ລ້ວນແຕ່ມີຄວາມສຳຄັນຢູ່ລະດັບປານກາງທັ້ງໝົດ ເຊິ່ງມີຄ່າສະເລ່ຍ ເທົ່າກັບ 3.38, 3.33, 3.28 ແລະ 3.10 ຕາມລຳດັບ.

ປັດໄຈດ້ານເທັກໂນໂລຊີ ໂດຍພາບລວມມີຄວາມສຳຄັນຢູ່ໃນລະດັບປານກາງ ເຊິ່ງມີຄ່າສະເລ່ຍ ເທົ່າກັບ 3.18 ແລະ ຄ່າຜັນປ່ຽນມາດຕະຖານ 0.66; ເຊິ່ງພິຈາລະນາເປັນປັດໄຈຍ່ອຍ ພົບວ່າ: ຄວາມວ່ອງໄວໃນການກະຈາຍຂໍ້ມູນຂ່າວສານໄປເຖິງລູກຄ້າເປົ້າໝາຍ, ຄວາມທັນສະໄໝຂອງເຄື່ອງມື ແລະ ອຸປະກອນທີ່ໃຊ້ໃນທຸລະກິດ, ຄວາມທັນສະໄໝ ແລະ ວ່ອງໄວຂອງລະບົບເທັກໂນໂລຊີການສື່ສານ ແລະ ຄວາມວ່ອງໄວໃນການພັດທະນາ ແລະ ການຖ່າຍທອດເທັກໂນໂລຊີລ້ວນແຕ່ມີຄວາມສຳຄັນຢູ່ລະດັບປານກາງທັ້ງໝົດ ເຊິ່ງມີຄ່າສະເລ່ຍ ເທົ່າກັບ 3.33, 3.28, 3.20 ແລະ 2.93 ຕາມລຳດັບ.

ປັດໄຈດ້ານການເງິນ ແລະ ຄວາມພ້ອມ ໂດຍພາບລວມມີຄວາມສຳຄັນຢູ່ໃນລະດັບປານກາງ ເຊິ່ງມີຄ່າສະເລ່ຍ ເທົ່າກັບ 3.21 ແລະ ຄ່າຜັນປ່ຽນມາດຕະຖານ 0.70; ເຊິ່ງພິຈາລະນາເປັນປັດໄຈຍ່ອຍ ພົບວ່າ: ຄວາມຄຸ້ມຄ່າຂອງກຳໄລທີ່ຄາດວ່າຈະໄດ້ຮັບ, ເງິນທຶນເລີ່ມຕົ້ນ ແລະ ສະພາບຄ່ອງ, ຕົ້ນທຶນໃນການດຳເນີນງານ ແລະ ການວາງແຜນທາງການເງິນໃນໄລຍະສັ້ນ ແລະ ໄລຍະຍາວ ລ້ວນແຕ່ມີຄວາມສຳຄັນຢູ່ລະດັບປານກາງທັ້ງໝົດ ເຊິ່ງມີຄ່າສະເລ່ຍ ເທົ່າກັບ 3.33, 3.28, 3.15 ແລະ 3.13 ຕາມລຳດັບ.

ປັດໄຈດ້ານສະພາບແວດລ້ອມ ແລະ ກົດໝາຍ ໂດຍພາບລວມມີຄວາມສຳຄັນຢູ່ໃນລະດັບປານກາງ ເຊິ່ງມີຄ່າສະເລ່ຍ ເທົ່າກັບ 3.33 ແລະ ຄ່າຜັນປ່ຽນມາດຕະຖານ 0.78; ເຊິ່ງພິຈາລະນາເປັນປັດໄຈຍ່ອຍ ພົບວ່າ: ສະພາບພູມອາກາດ ແມ່ນມີຄວາມສຳຄັນຢູ່ໃນລະດັບຫຼາຍ ເຊິ່ງມີຄ່າສະເລ່ຍ ເທົ່າກັບ 3.50; ສ່ວນທຳເລທີ່ຕັ້ງຂອງກິດຈະການ, ແຫຼ່ງຊັບພະຍາກອນທຳມະຊາດ, ນະໂຍບາຍສົ່ງເສີມການດຳເນີນທຸລະກິດ ແລະ ກົດໝາຍ ແລະ ຂໍ້ບັງຄັບ ແມ່ນມີຄວາມສຳຄັນຢູ່ໃນລະດັບປານກາງ ເຊິ່ງມີຄ່າສະເລ່ຍ ເທົ່າກັບ 3.35, 3.33, 3.30 ແລະ 3.20 ຕາມລຳດັບ.

ປັດໄຈດ້ານຕະຫຼາດ ແລະ ໂອກາດທຸລະກິດ ໂດຍລວມມີຄວາມສຳຄັນຢູ່ໃນລະດັບຫຼາຍ ເຊິ່ງມີຄ່າສະເລ່ຍເທົ່າກັບ 3.43 ແລະ ຄ່າຜັນປ່ຽນມາດຕະຖານ 0.61; ເມື່ອວິເຄາະເປັນປັດໄຈຍ່ອຍ ພົບວ່າ: ຄູ່ແຂ່ງຂັນ, ຄວາມຕ້ອງການຂອງຕະຫຼາດ ແລະ ແນວໂນ້ມພຶດຕິກຳຜູ້ບໍລິໂພກ ແມ່ນມີຄວາມສຳຄັນຢູ່ໃນລະດັບຫຼາຍ ເຊິ່ງມີຄ່າສະເລ່ຍ ເທົ່າກັບ 3.80, 3.58 ແລະ 3.48 ຕາມລຳດັບ; ສ່ວນຕົ້ນທຶນສິນຄ້າທີ່ນຳມາຈຳໜ່າຍໃນທຸລະກິດ, ຄວາມຕ້ອງການຂະຫຍາຍຕະຫຼາດ ແລະ ສ່ວນແບ່ງຕະຫຼາດ ແມ່ນມີຄວາມສຳຄັນຢູ່ໃນລະດັບປານກາງ ເຊິ່ງມີຄ່າສະເລ່ຍ ເທົ່າກັບ 3.35, 3.25 ແລະ 3.15 ຕາມລຳດັບ.

## 4. ວິພາກຜົນ

ການດຳເນີນວິສາຫະກິດຢູ່ເມືອງບຸນເໜືອ ແຂວງຜົ້ງສາລີ ໂດຍສ່ວນໃຫຍ່ແມ່ນໄດ້ດຳເນີນວິສາຫະກິດມາແລ້ວຫຼາຍກວ່າ 5 ປີ ເຊິ່ງປະກອບດ້ວຍວິສາຫະກິດບໍລິການ ແລະ ວິສາຫະກິດການຄ້າ, ສ່ວນວິສາຫະກິດຂະແໜງການຜະລິດ ແມ່ນຍັງບໍ່ຫຼາຍເທົ່າທີ່ຄວນ; ການດຳເນີນວິສາຫະກິດສ່ວນໃຫຍ່ແມ່ນຢູ່ເຂດທາສະໜາມເມືອງ ແລະ ໃນເຂດໃຈກາງເມືອງ, ມີລາຍໄດ້ສະເລ່ຍ/ເດືອນ ຫຼາຍກວ່າ 20 ລ້ານກີບ ເຊິ່ງສອດຄ່ອງກັບຜົນການສຶກສາຂອງ Siritho (2016) ທີ່ພົບວ່າ: ຜູ້ປະກອບການວິສາຫະກິດດຳເນີນທຸລະກິດມາແລ້ວຫຼາຍກວ່າ 6 ປີ, ປະເພດທຸລະກິດໂດຍສ່ວນໃຫຍ່ແມ່ນການບໍລິການ ແລະ ດຳເນີນທຸລະກິດສ່ວນບຸກຄົນ ແລະ ຍັງສອດຄ່ອງກັບຜົນການຄົ້ນຄວ້າຂອງ Tubtemdee (2024) ທີ່ວ່າ: ໄລຍະເວລາໃນການດຳເນີນທຸລະກິດຫຼາຍກວ່າ 5 ປີ ແລະ ມີລາຍໄດ້ສະເລ່ຍຢູ່ລະຫວ່າງຫຼາຍກວ່າ 20 ລ້ານກີບ/ເດືອນ.

ຜົນການວິເຄາະລະດັບຄວາມສຳຄັນຂອງປັດໄຈທີ່ສົ່ງຜົນຕໍ່ການດຳເນີນວິສາຫະກິດຂອງຜູ້ປະກອບການວິສາຫະກິດ SMEs ໃນເມືອງບຸນເໜືອ, ແຂວງຜົ້ງສາລີ ພົບວ່າ: ໂດຍພາບລວມ ແມ່ນມີຄວາມສຳຄັນຢູ່ໃນລະດັບປານກາງ. ເມື່ອວິເຄາະເປັນແຕ່ລະປັດໄຈ ພົບວ່າ: ປັດໄຈຄຸນລັກສະນະພາຍໃນຂອງຜູ້ປະກອບການ ແລະ ປັດໄຈດ້ານຕະຫຼາດ ແລະ ໂອກາດທຸລະກິດ ແມ່ນມີຄວາມສຳຄັນຢູ່ໃນລະດັບຫຼາຍ; ເມື່ອພິຈາລະນາເປັນປັດໄຈຍ່ອຍພົບວ່າ: ການດຳເນີນວິສາຫະກິດເນື່ອງຈາກຄວາມມັກສ່ວນຕົວ, ຄວາມສາມາດໃນການພັດທະນາກິດຈະການ ແລະ ຄວາມຮູ້ຄວາມສາມາດໃນການກຳນົດທິດທາງຂອງທຸລະກິດຂອງຜູ້ປະກອບການ, ລະດັບອັດຕາເງິນເຟີ້ໃນລະບົບເສດຖະກິດ, ສະພາບພູມອາກາດ, ຄູ່ແຂ່ງຂັນ, ຄວາມຕ້ອງການຂອງຕະຫຼາດ ແລະ ແນວໂນ້ມພຶດຕິກຳຜູ້ບໍລິໂພກ ແມ່ນມີຄວາມສຳຄັນຢູ່ໃນລະດັບຫຼາຍ. ເຊິ່ງສອດຄ່ອງກັບຜົນການສຶກສາຂອງ Tubtemdee (2024) ທີ່ພົບວ່າ: ປັດໄຈຄຸນລັກສະນະພາຍໃນຂອງຜູ້ປະກອບການ ໂດຍລວມມີລະດັບຄວາມສຳຄັນຢູ່ນລະດັບຫຼາຍ ແລະ ເມື່ອພິຈາລະນາເປັນປັດໄຈຍ່ອຍ ພົບວ່າ: ລະດັບຄວາມຮູ້ຄວາມສາມາດຂອງຜູ້ປະກອບການ, ຄວາມມັກສ່ວນຕົວຂອງຜູ້ປະກອບການ ແມ່ນມີຄວາມສຳຄັນຢູ່ໃນລະດັບຫຼາຍ; ສ່ວນປັດໄຈດ້ານເສດຖະກິດ, ປັດໄຈດ້ານການເມືອງ, ປັດໄຈດ້ານສັງຄົມ, ປັດໄຈດ້ານເທັກໂນໂລຊີ , ປັດໄຈດ້ານການເງິນ ແລະ ຄວາມພ້ອມ, ປັດໄຈດ້ານສະພາບແວດລ້ອມ ແລະ ກົດໝາຍ ແມ່ນມີຄວາມສຳຄັນຢູ່ໃນລະດັບປານກາງ ເຊິ່ງບໍ່ສອດຄ່ອງກັບຜົນການສຶກສາຂອງ Reokam et al, (2023) ເຊິ່ງຜົນການສຶກສາພົບວ່າ: ປັດໄຈດ້ານການຈັດການ, ປັດໄຈດ້ານການຕະຫຼາດ, ປັດໄຈດ້ານການປະຕິບັດງານ ແລະ ເທັກໂນໂລຊີ ແລະ ປັດໄຈດ້ານການເງິນ ລ້ວນແຕ່ມີຄວາມສຳຄັນໃນລະດັບຫຼາຍທັ້ງໝົດ ແລະ ເມື່ອພິຈາລະນາເປັນປັດໄຈຍ່ອຍພົບວ່າ: ຄວາມຄຸ້ມຄ່າຂອງກຳໄລທີ່ຄາດວ່າຈະໄດ້ຮັບ, ຄວາມສາມາດຍອມຮັບຄວາມສ່ຽງຂອງຜູ້ປະກອບການ ແມ່ນມີຄ່າສະເລ່ຍຕ່ຳສຸດ ແລະ ມີຄວາມສຳຄັນຢູ່ໃນລະດັບປານກາງ ເຊິ່ງບໍ່ສອດຄ່ອງກັບຜົນການສຶກສາຂອງ Wiset (2017) ແລະ Tubtemdee (2024) ທີ່ພົບວ່າ: ຄວາມເປັນໄປໄດ້ຂອງອັດຕາຜົນຕອບແທນຈາກການລົງທຶນ ແລະ ຄວາມສາມາດຍອມຮັບຄວາມສ່ຽງຂອງຜູ້ປະກອບການແມ່ນມີຄວາມສຳຄັນຢູ່ໃນລະດັບຫຼາຍ ແລະ ຍັງສອດຄ່ອງກັບຜົນການສຶກສາຂອງ Reokam et al, (2023) ໃນດ້ານຂອງປັດໄຈການຈັດການ, ການເງິນ, ການຕະຫຼາດ ແລະ ການປະຕິບັດການ ແລະ ເທັກໂນໂລຊີ ລ້ວນແຕ່ມີຄວາມສຳຄັນຕໍ່ການດຳເນີນທຸລະກິດຢູ່ໃນລະດັບຫຼາຍ.

## 5. ສະຫຼຸບ

ການດຳເນີນວິສາຫະກິດໂດຍສ່ວນໃຫຍ່ແມ່ນດຳເນີນໂດຍຜູ້ທີ່ມີຖິ່ນອາໄສເດີມພາຍໃນເມືອງບຸນເໜືອ, ເຊິ່ງດຳເນີນວິສາຫະກິດມາແລ້ວເປັນເວລາ 5 ປີຂຶ້ນໄປ ແລະ ເປັນວິສາຫະກິດ, ວິສາຫະກິດທີ່ດຳເນີນປະເພດນີ ການບໍລິການ , ການຄ້າ ແລະ ການຜະລິດ ເຊິ່ງສ່ວນໃຫຍ່ຕັ້ງຢູ່ເຂດເທດສະບານເມືອງ ແລະ ໃນເຂດໃຈກາງເມືອງເປັນຫຼັກ; ລັກສະນະການສ້າງຕັ້ງວິສາຫະກິດ ໂດຍສ່ວນໃຫຍ່ແມ່ນສ້າງຂຶ້ນເອງ. ສຳລັບ ປັດໄຈທີ່ສົ່ງຜົນຕໍ່ການດຳເນີນວິສາຫະກິດຂອງຜູ້ປະກອບການວິສາຫະກິດ SMEs ໃນເມືອງບຸນເໜືອ, ແຂວງຜົ້ງສາລີ ພົບວ່າ: ປັດໄຈທີ່ມີຄວາມສຳຄັນຢູ່ໃນລະດັບຫຼາຍ ຄື: ປັດໄຈຄຸນລັກສະນະພາຍໃນຂອງຜູ້ປະກອບ ແລະ ປັດໄຈດ້ານຕະຫຼາດ ແລະ ໂອກາດທຸລະກິດ ໂດຍສະເພາະປັດໄຈດ້ານການດຳເນີນວິສາຫະກິດເນື່ອງຈາກຄວາມພັກສ່ວນຕົວ, ຄວາມສາມາດໃນການພັດທະນາທີ່ດິນຈະການ ແລະ ຄວາມຮູ້ຄວາມສາມາດໃນການກຳນົດທິດທາງຂອງທຸລະກິດຂອງຜູ້ປະກອບການ, ລະດັບອັດຕາເງິນເຟີ້ໃນລະບົບເສດຖະກິດ, ສະພາບພູມອາກາດ, ຄູ່ແຂ່ງຂັນ, ຄວາມຕ້ອງການຂອງຕະຫຼາດ ແລະ ແນວໂນ້ມພຶດຕິກຳຜູ້ບໍລິໂພກ ແມ່ນມີຄວາມສຳຄັນຢູ່ໃນລະດັບຫຼາຍ; ສ່ວນປັດໄຈດ້ານເສດຖະກິດ, ປັດໄຈດ້ານການເມືອງ, ປັດໄຈດ້ານສັງຄົມ, ປັດໄຈດ້ານເທັກໂນໂລຊີ, ປັດໄຈດ້ານການເງິນ ແລະ ຄວາມພ້ອມ, ປັດໄຈດ້ານສະພາບແວດລ້ອມ ແລະ ກົດໝາຍ ແມ່ນມີຄວາມສຳຄັນຢູ່ໃນລະດັບປານກາງ. ເຖິງຢ່າງໃດກໍ່ຕາມການສຶກສາປັດໄຈທີ່ສົ່ງຜົນຕໍ່ການດຳເນີນວິສາຫະກິດຂອງຜູ້ປະກອບການວິສາຫະກິດຂະໜາດນ້ອຍ ແລະ ກາງ (SMEs) ໃນເມືອງບຸນເໜືອ ແຂວງຜົ້ງສາລີ ເຖິງວ່າຈະສາມາດສະທ້ອນໃຫ້ເຫັນເຖິງລັກສະນະຂອງຜູ້ປະກອບການ ແລະ ລະດັບຄວາມສຳຄັນຂອງປັດໄຈຕ່າງໆທີ່ກ່ຽວຂ້ອງກັບການດຳເນີນທຸລະກິດໄດ້ ແຕ່ການສຶກສາຍັງມີຂໍ້ຈຳກັດບາງປະການ ຊຶ່ງຄວນນຳມາພິຈາລະນາໃນການເຜີຍການສຶກສາ ແລະ ນຳໄປໃຊ້ປະໂຫຍດ ດັ່ງນີ້: ຂໍ້ຈຳກັດດ້ານຂອບເຂດພື້ນທີ່ສຶກສາ: ການສຶກສາຄັ້ງນີ້ມຸ່ງເນັ້ນສະເພາະຜູ້ປະກອບການ SMEs ໃນເມືອງບຸນເໜືອ ແຂວງຜົ້ງສາລີ ເທົ່ານັ້ນ ເຊິ່ງແຕ່ລະພື້ນທີ່ມີສະພາບເສດຖະກິດ, ສັງຄົມ, ຕະຫຼາດ, ໂຄງສ້າງພື້ນຖານ ແລະ ໂອກາດທາງທຸລະກິດທີ່ແຕກຕ່າງກັນ. ດັ່ງນັ້ນ ຜົນການສຶກສາອາດບໍ່ສາມາດນຳໄປອ້າງອີງໃຊ້ກັບ SMEs ໃນເມືອງອື່ນຂອງແຂວງຜົ້ງສາລີ ຫຼື ແຂວງອື່ນໆຂອງ ສປປ ລາວ ໄດ້ຢ່າງຄອບຄຸມ. ຈາກຜົນການສຶກສາທີ່ພົບວ່າ ປັດໄຈດ້ານຄຸນລັກສະນະພາຍໃນຂອງຜູ້ປະກອບການ ແລະ ປັດໄຈດ້ານຕະຫຼາດ ແລະ ໂອກາດທຸລະກິດມີຄວາມສຳຄັນຢູ່ໃນລະດັບຫຼາຍ ຂະນະທີ່ປັດໄຈດ້ານອື່ນໆມີຄວາມສຳຄັນຢູ່ໃນລະດັບປານກາງ ການສຶກສາໃນຄັ້ງຕໍ່ໄປຄວນຂະຫຍາຍຂອບເຂດການສຶກສາໃຫ້ກວ້າງຂຶ້ນ ແລະ ລົງເລິກໃນປະເດັນທີ່ສຳຄັນ ເພື່ອໃຫ້ສາມາດອະທິບາຍສະພາບການດຳເນີນທຸລະກິດ ແລະ ກຳນົດແນວທາງສົ່ງເສີມ SMEs ໄດ້ຢ່າງມີປະສິດທິຜົນ ດັ່ງນີ້: ສຶກສາປັດໄຈດ້ານຕະຫຼາດ ແລະ ໂອກາດທຸລະກິດໃຫ້ລະອຽດຂຶ້ນ: ເນື່ອງຈາກຜົນການສຶກສາພົບວ່າ ປັດໄຈດ້ານຕະຫຼາດ ແລະ ໂອກາດທຸລະກິດມີຄວາມສຳຄັນໃນລະດັບຫຼາຍ ຈຶ່ງຄວນສຶກສາເພີ່ມເຕີມກ່ຽວກັບກຳລັງຊື້ຂອງປະຊາຊົນ, ຄວາມຕ້ອງການສິນຄ້າ, ການປ່ຽນແປງພຶດຕິກຳຜູ້ບໍລິໂພກ, ລະດັບການແຂ່ງຂັນ, ການກຳນົດລາຄາ ແລະ ຊ່ອງທາງຈຳໜ່າຍສິນຄ້າ. ນອກຈາກນີ້ ຄວນສຶກສາໂອກາດການຂາຍຜ່ານອອນລາຍ ແລະ ການເຊື່ອມໂຍງຕະຫຼາດກັບພື້ນທີ່ອື່ນ.

## 6. ຂໍ້ຂັດແຍ່ງ

ຂ້າພະເຈົ້າໃນນາມຄົນຄວ້າ ຂໍປະກາດຕໍ່ນວ່າ ຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ ແມ່ນບໍ່ມີຂໍ້ຂັດແຍ່ງທາງຜົນປະໂຫຍດກັບພາກສ່ວນໃດ ແລະ ບໍ່ໄດ້ເອື້ອປະໂຫຍດໃຫ້ກັບພາກສ່ວນໃດພາກສ່ວນໜຶ່ງ, ກໍລະນີມີການລະເມີດ ໃນຮູບການໃດໜຶ່ງ ຂ້າພະເຈົ້າມີຄວາມຍິນດີ ທີ່ຈະຮັບຜິດຊອບແຕ່ຝຽງຜູ້ດຽວ.

## 7. ເອກະສານອ້າງອີງ


Barney, J. (1991). Firm resources and sustained competitive advantage. *Journal of Management, 17*(1), 99–120. https://doi.org/10.1177/014920639101700108

Department of Industry and Commerce Phongsaly Province. (2025). *Annual summary 2025*. Department of Industry and Commerce Phongsaly Province.

Kamolsin, C. (2022). *Causal factors affecting industrial business effectiveness in digital industry promotion and innovation zone, Thailand* [Unpublished master's dissertation]. Naresuan University.

Lamjuntuek, P. (2016). *Factor affecting business decision on agriculture goods importation from Cambodia* [Unpublished master's dissertation]. Burapha University.

Ministry of Industry and Commerce of Lao PDR. (2024). *Annual Summary 2024 and Implementation Plan 2025*. Ministry of Industry and Commerce.

Organisation for Economic Co-operation and Development. (2024). *Multi-dimensional review of Lao PDR*. OECD Publishing. https://doi.org/10.1787/756b6663-en

Penrose, E. T. (1959). *The theory of the growth of the firm*. Basil Blackwell.

Phacheerat, K. (2008). *An analysis of business operations of vegetable and fruit processing industrial entrepreneurs according to the sufficiency economy philosophy in Nakhon Pathom Province* [Unpublished master's thesis]. Silpakorn University.

Planning and Investment Department of Phongsaly. (2025). *Socio-economic development plan, 2025-2029*. Planning and Investment Department of Phongsaly Province.

Reokarn, T., Thipsri, N., Techapunratanakul, N., & Srivichai, M. (2023). THE INFLUENCE OF BUSINESS OPERATIONAL FACTORS ON THE GROWTH OF SMEs IN CHIANGRAI PROVINCE. *Strategic Perspectives on Business and Marketing Management, 10*(2), 74–94. https://doi.org/10.60101/mmr.2023.267405

Sabkird, P., and Pattanarangsun, P. (2020). The Impact of Macroeconomic Determinants on Small and Medium Enterprises in Chon Buri Province. *Rajabhat Chiangmai research journal. 21*(2). 184-196

Sioudomphan, S., Chanthavone, T., Siphanthong, B., Duangpasith, P., Phommany, S., Phanthouamath, P., Chittaphone, N., & Keodouangkham, P. (2024). The Analysis of Labor Demand of the Private sector in the Northern Provinces of Lao PDR. *Souphanouvong University Journal Multidisciplinary Research and Development, 10*(1), 222–233. https://www.su-journal.com/index.php/su/article/view/652

Siritho, S. (2016). *Factors influence business operations of small and medium enterprise in Pathum Thani province* [Unpublished master's dissertation]. North Bangkok University.

Sirivanh, T., & Chaikeaw, A. (2012). Factors Affecting toward Growth of Small and Medium Enterprises in Lao People's Democratic Republic. *Journal of Interdisciplinary Research: Graduate Edition. 1*(2). 28-35

Tubtemdee, J. (2024). Factors influencing on entrepreneur characteristics and strategies impacting competitive advantage in operating small and medium-sized enterprises (SMEs) in Suphanburi Province. *Interdisciplinary Academic and Research Journal*, *4*(5), 189–204. https://doi.org/10.60027/iarj.2024.280737

Wiset, N. (2017). Factors influencing business operations of small and medium enterprise entrepreneurs in Nonthaburi province. *Panyapiwat Journal, 9*(1). 13-24.

World Bank. (2025). *Lao economic monitor, May 2025: Weathering risks*. https://www.worldbank.org/en/country/lao/publication/lao-economic-monitor-may-2025-weathering-risks-key-findings

Yamane, T. (1973). *Statistics: An introductory analysis* (3rd ed.). Harper & Row.